**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ
ສະພາທິດສະດີສູນກາງພັກ
ຫ້ອງການສະພາທິດສະດີສູນກາງພັກ

ເລກທີ.198./ຫກ.ສທພ
ນະຄອນຫຼວງວຽງຈັນ, ວັນທີ.10./10./2024

## ໜັງສືແຈ້ງການເຊີນປະມູນເປີດກ້ວາງພາຍໃນ
## ໂຄງການສະໜອງເຟີນິເຈີໃສ່ຕຶກອາຄານສະພາທິດສະດີສູນກາງພັກ

- ອີງຕາມ ມະຕິຕົກລົງຂອງຄະນະເລຂາທິການສູນກາງພັກປະຊາຊົນປະຕິວັດລາວ, ສະບັບເລກທີ 68/ຄລສພ, ລົງວັນທີ 2/3/2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາທິດສະດີສູນກາງພັກ.
- ອີງຕາມ ແຈ້ງການຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0193/ກຜທ.ກຜ4, ລົງວັນທີ 26 ມັງກອນ 2024.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ຈັດຕັ້ງປະຕິບັດໂຄງການສະໜອງເຟີນິເຈີໃສ່ຕຶກອາຄານ ສະພາທິດສະດີສູນກາງພັກ ສະບັບເລກທີ 140/ສທພ, ລົງວັນທີ 12/07/2024.

1) ສະພາທິດສະດີສູນກາງພັກ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິທີ່ເໝາະສົມເຂົ້າຍື່ນຊອງປະມູນ ສໍາລັບໂຄງການສະໜອງເຟີນິເຈີໃສ່ຕຶກອາຄານສະພາທິດສະດີສູນກາງພັກ ກໍານົດໄລຍະ 36 ເດືອນ.
2) ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3) ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການສະໜອງເຟີນິເຈີ ດັ່ງກ່າວ.
4) ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະພາທິດສະດີສູນກາງພັກ (ຫຼັກ 6) ຢູ່ພາຍໃນເຂດຮົ້ວຫ້ອງວ່າການສູນກາງພັກ; ສອບຖາມຂໍ້ມູນຕົວຈິງໄດ້ໂດຍພົວພັນຫາທ່ານ **ນາງ ພອນທິບ ສີຈະເລີນ ຫົວໜ້າຫ້ອງການສະພາທິດສະດີສູນກາງພັກ; ເບີໂທລະສັບຕັ້ງໂຕະ 021 711612; ມືຖື 020 22211885** ແລະ ຊື້ເອກະສານປະມູນ ໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການນີ້ເປັນຕົ້ນໄປ.
5) ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນ ຕ້ອງຍື່ນໜັງສືສະເໜີຫາ ຫ້ອງການສະພາທິດສະດີສູນກາງພັກ (ຫຼັກ 6) ໃນໂມງລັດຖະການ, ເລີ່ມແຕ່ວັນທີ **10/10/2024** ເປັນຕົ້ນໄປ. ໃນລາຄາ:

**1.500.000 ກີບຕໍ່ຊອງ**, ຈຳນວນເງິນດັ່ງກ່າວ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.

6) ຊອງປະມູນ ຕ້ອງສົ່ງໃນເວລາ ຫຼື ກ່ອນເວລາ: **09:00 ໂມງ** ຂອງວັນສຸກ ທີ **15/11/2024** ທີ່ຫ້ອງການສະພາທິດສະດີສູນກາງພັກ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ສາມາດຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ: **09:30 ໂມງ**, ວັນທີ **15/11/2024** ທີ່ຫ້ອງການສະພາທິດສະດີສູນກາງພັກ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳຕາມສະຖານທີ່ຂ້າງລຸ່ມນີ້.

7) ການຄ້ຳປະກັນການປະມູນດ້ວຍເງິນສົດ, ແຊັກ (ວີຊາ), ໜັງສືຄ້ຳປະກັນອອກໂດຍທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າສະເໜີ ແລະ ໃສ່ມາພ້ອມຊອງປະມູນ.

8) ທີ່ຢູ່ ສະພາທິດສະດີສູນກາງພັກ (ຫຼັກ 6), ຕັ້ງຢູ່ບ້ານ ສີວິໄລ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ.

- **ສະຖານທີ່ຊື້ເອກະສານປະມູນ:**
ພະແນກຄຸ້ມຄອງບໍລິຫານ, ພິທີການ ແລະ ການຮ່ວມມື; ຫ້ອງການສະພາທິດສະດີສູນກາງພັກ (ຫຼັກ 6), ຕັ້ງຢູ່ບ້ານ ສີວິໄລ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ. **ນາງ ສອນນາລີ ຫາວັນນະລາດ. ເບີໂທລະສັບ: 020 55495949 ແຕ່ວັນຈັນ-ວັນສຸກ (ໃນໂມງລັດຖະການ)**

**ຫ້ອງການສະພາທິດສະດີສູນກາງພັກ**

ຄຸນົ ຈະບານ **(ຫົວໜ້າຄະນະຮັບຜິດຊອບໂຄງການ)**

ຄະນະໂຄສະນາອົບຮົມສູນກາງພັກ ຫ້ອງການສະພາທິດສະດີສູນກາງພັກ

**ນ. ພອນທິບ ສີຈະເລີນ**